ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມການບິນພົນລະເຮືອນ
ຄະນະກຳມະການຈັດຊື້-ຈັດຈ້າງ

ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2026

ໜັງສືແຈ້ງເຊີນປະມູນ

1. ອີງຕາມ ຂໍ້ຕົກລົງ ຂອງທ່ານລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄົ້ນຄວ້າ ແລະ ດຳເນີນການປະມູນຈັດຊື້-ຈັດຈ້າງ ສ້ອມແປງຫ້ອງການ ຂອງກົມການບິນພົນລະເຮືອນ. ສະບັບເລກທີ 13354/ຍທຂ, ລົງວັນທີ 11 ມິຖຸນາ 2026;
2. ໃນນາມຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບອະນຸມັດງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ຂອງກົມການບິນພົນລະເຮືອນ, ລາຍລະອຽດໄດ້ລະບຸໄວ້ໃນເອກະສານຄຳແນະນຳການປະມູນ;
3. ຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຮຽນເຊີນບັນດາບໍລິສັດຜູ້ຮັບເໝົາ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຮ່ວມຊື້ຊອງ ແລະ ຍື່ນຊ່ອງປະມູນໃນການຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ສ້ອມແປງຫ້ອງການ ຂອງກົມການບິນພົນລະເຮືອນ ຊຶ່ງມີລາຍລະອຽດ ດັ່ງນີ້:

   - ວຽກງານວຽກງານສ້ອມແປງຫ້ອງສະໝຸດ ຊອງ 1/500,000 ກີບ (ກຳນົດເປີດຂາຍໃນວັນທີ 26 ຕຸລາ 2026 ໄລຍະການຈັດຕັ້ງປະຕິບັດ 90 ວັນ).

4. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ (ພາຍໃນ) ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
5. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນວຸດທິທີ່ເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມການບິນພົນລະເຮືອນ ກະຊວງໂຍທາທິການ ແລະ ຂົນສົ່ງ. ເບີໂທຕິດຕໍ່ 020 22404897 ແລະ 020 54777775 ໃນວັນລັດຖະການ;
6. ຊອງປະມູນຈະຕ້ອງສົ່ງກ່ອນເວລາ 24 ພະຈິກ 2026 ໂມງ ຂອງວັນທີ 13:00 ໂມງ ຊອງປະມູນທຸກຊອງຈະໄດ້ເປີດໃນວັນທີ 24 ພະຈິກ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ຂອງກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມ;
7. ຫາກຊອງປະມູນໃດສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ./.

ຫົວໜ້າກົມການບິນພົນລະເຮືອນ

ວຽງໄຊ ສີງຄຳ